ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 18 /ນຍ
ນະຄອນຫຼວງວຽງຈັນ, ວັນທີ 16.09.2021

# ຄຳສັ່ງ
# ວ່າດ້ວຍການເພີ່ມທະວີການຄຸ້ມຄອງ ແລະ ຕ້ານການຮົ່ວໄຫຼ ຂອງລາຍຮັບງົບປະມານແຫ່ງລັດ

**ເຖິງ:** - ບັນດາ ທ່ານ ລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ;
- ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ, ບັນດາ ທ່ານ ເຈົ້າແຂວງ ໃນຂອບເຂດທົ່ວປະເທດ.

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ (ສະບັບປັບປຸງ) ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍ ງົບປະມານແຫ່ງລັດ (ສະບັບປັບປຸງ) ສະບັບເລກທີ 71/ສພຊ, ລົງວັນທີ 16 ທັນວາ 2015;
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 5 ປີ (2016-2020) ແລະ ທິດທາງແຜນງົບປະມານແຫ່ງລັດ 5 ປີ (2021-2025) ສະບັບເລກທີ 21/ສພຊ, ລົງວັນທີ 21 ມີນາ 2021;
- ອີງຕາມ ໜັງສືສະເໜີຂອງກະຊວງການເງິນ ສະບັບເລກທີ 3210/ກງ, ລົງວັນທີ 22 ກໍລະກົດ 2021;
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ສະບັບເລກທີ 03/ສພຊ, ລົງວັນທີ 10 ສິງຫາ 2021.

ເພື່ອຈັດຕັ້ງຜັນຂະຫຍາຍ ມະຕິກອງປະຊຸມສະພາແຫ່ງຊາດ ກ່ຽວກັບການຮັບຮອງເອົາທິດທາງແຜນງົບປະມານແຫ່ງລັດ 5 ປີ (2021-2025) ແລະ ປະຕິບັດຕາມວາລະແຫ່ງຊາດ ໃນການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ; ເພື່ອສ້າງຄວາມເປັນເອກະພາບລະດັບສູງໃນການເພີ່ມທະວີການຄຸ້ມຄອງ ແລະ ຕ້ານການຮົ່ວໄຫຼຂອງລາຍຮັບງົບປະມານແຫ່ງລັດ ຢູ່ໃນຄວາມຮັບຜິດຊອບຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ, ບັນດາຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ໃນຂອບເຂດທົ່ວປະເທດ.

## ນາຍົກລັດຖະມົນຕີ ອອກຄຳສັ່ງ:

1. ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ ແລະ ຂັ້ນແຂວງ, ຫົວໜ່ວຍງົບປະມານບໍລິຫານວິຊາການ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນ ຕ້ອງເພີ່ມທະວີຄວາມຮັບຜິດຊອບ ຕາມໜ້າທີ່, ຂອບເຂດສິດຂອງຕົນ ໃນການຈັດຕັ້ງປະຕິບັດ ບັນດາກົດໝາຍ, ນິຕິກຳໃຕ້ກົດໝາຍ ທີ່ໄດ້ກຳນົດອອກ ໃນວຽກງານຄຸ້ມຄອງ ແລະ ຕ້ານການຮົ່ວໄຫຼລາຍຮັບງົບປະມານແຫ່ງລັດ.

2. ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນ ໃຫ້ ຢຸດຕິ ຫຼື ລົບລ້າງ ບັນດານິຕິກຳໃຕ້ກົດໝາຍທີ່ໄດ້ກຳນົດອອກ ໂດຍບໍ່ສອດຄ່ອງກັບ ກົດໝາຍ ແລະ ລະບຽບການຕ່າງໆຂອງການຄຸ້ມຄອງລາຍຮັບງົບປະມານແຫ່ງລັດ.
3. ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ (ຄລທສ) ແລະ ຂັ້ນແຂວງ (ຄລທຂ) ເປັນເຈົ້າການ ເພີ່ມທະວີຄວາມຮັບຜິດຊອບໃນການຄົ້ນຄວ້າວາງມາດຕະການຈັດຕັ້ງປະຕິບັດ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ກຳນົດອອກ ເຊັ່ນ: ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍພາສີ (ສະບັບປັບປຸງ), ກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ, ກົດໝາຍວ່າດ້ວຍອາກອນຊົມໃຊ້, ກົດໝາຍວ່າດ້ວຍອາກອນລາຍໄດ້, ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ, ກົດໝາຍວ່າດ້ວຍບັນຊີ, ກົດໝາຍວ່າດ້ວຍວິສາຫະກິດ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ. ໃນກໍລະນີອື່ນ ທີ່ນອກເໜືອຈາກກົດໝາຍ ແລະ ນິຕິກຳ ທີ່ກຳນົດອອກແລ້ວ ຕ້ອງນຳສະເໜີລັດຖະບານ ເພື່ອຂໍອະນຸມັດຈາກສະພາແຫ່ງຊາດ ໂດຍສະເພາະບັນດາໂຄງການລົງທຶນຂະໜາດໃຫຍ່ ທີ່ຕິດພັນກັບຊັບພະຍາກອນທຳມະຊາດ, ແຮ່ທາດ, ພະລັງງານໄຟຟ້າ ແລະ ໂຄງການກໍ່ສ້າງພື້ນຖານໂຄງລ່າງເຫຼົ່ານີ້ເປັນຕົ້ນ.
4. ກະຊວງການເງິນ ແລະ ຂະແໜງການເງິນຂັ້ນທ້ອງຖິ່ນ ຮັບຜິດຊອບ:
   4.1. ທົບທວນນະໂຍບາຍ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຂອງຂະແໜງການເງິນ ທີ່ປະກາດໃຊ້ໃນປະຈຸບັນ ແລະ ຄົ້ນຄວ້າສ້າງກົດໝາຍ ແລະ ນິຕິກຳໃໝ່ ເພື່ອຮັບປະກັນການຄຸ້ມຄອງລາຍຮັບຕາມຖານລາຍຮັບທີ່ມີປະຈຸບັນ ແລະ ທຸກທ່າແຮງບໍ່ມຊ້ອນ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ເພີ່ມຂຶ້ນ, ອັດທຸກຊ່ອງວ່າງທີ່ຮົ່ວໄຫຼຈາກການສວຍໃຊ້ໜ້າທີ່ຂອງເຈົ້າໜ້າທີ່ທຸກຂັ້ນ, ທຸກລະດັບ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເພື່ອຮັບປະກັນບໍ່ໃຫ້ສາມາດຫຼົບຫຼີກ, ເຊື່ອງອຳ ພັນທະຕໍ່ງົບປະມານແຫ່ງລັດ ຢ່າງຂາດຕົວ. ໃນກໍລະນີການຈັດຕັ້ງໃດໜຶ່ງຫາກ ຕົກລົງ ຫຼື ສ້າງລະບຽບການຈັດເກັບລາຍຮັບທີ່ບໍ່ສອດຄ່ອງຕາມກົດໝາຍ ກໍມີສິດສະເໜີລົບລ້າງ ຫຼື ຢຸດຕິ ທັນທີ;
   4.2. ປະຕິຮູບກົນໄກການຄຸ້ມຄອງລາຍຮັບງົບປະມານຢ່າງແຂງແຮງ, ລວງເລິກຮອບດ້ານ ດັ່ງນີ້:
      4.2.1. ປັບປຸງ ແລະ ຂະຫຍາຍລະບົບການຄຸ້ມຄອງລາຍຮັບແບບທັນສະໄໝ ທີ່ພັດທະນາສຳເລັດແລ້ວ ແລະ ໄດ້ນຳໃຊ້ໃນປະຈຸບັນ ເຊັ່ນ: ໂຄງການຄຸ້ມຄອງລະບົບຂໍ້ມູນຂ່າວສານສ່ວຍສາອາກອນ (TaxRIS) ໃຫ້ຄອບຄຸມເອົາ 17 ແຂວງ, ນະຄອນຫຼວງວຽງຈັນ ແລະ 65 ເມືອງ ທີ່ມີເງື່ອນໄຂໃນປີ 2021-2022 ແລະ ສືບຕໍ່ຂະຫຍາຍໃຫ້ກວມເອົາທຸກເມືອງໃນຂອບທົ່ວປະເທດ ໃນປີ 2023; ສ້າງລະບົບຄຸ້ມຄອງຖານຂໍ້ມູນການເງິນແບບລວມສຸນ, ຄຸ້ມຄອງລາຍຮັບງົບປະມານແຫ່ງລັດ ເຂົ້າໃນລະບົບລວມສຸນ ເຊັ່ນ: ASYCUDA, TaxRIS, Easy Tax, SMART Tax ເພື່ອສ້າງພື້ນຖານທັນເປັນລະບົບຄຸ້ມຄອງແບບດິຈິຕອນ ຕາມຍຸດທະສາດການພັດທະນາຂະແໜງການເງິນ ໂດຍມີການສົມທົບກັບກະຊວງເຕັກໂນໂລຊີ ແລະ ການສື່ສານ;
      4.2.2. ປັບປຸງລະບົບການຄຸ້ມຄອງ ແລະ ຂະຫຍາຍຖານລາຍຮັບ ໃນຂອບເຂດທົ່ວປະເທດ ຄື:
         1) ກຳນົດການຈັດປະເພດຖານລາຍຮັບຂອງຫົວໜ່ວຍທຸລະກິດຄືນໃໝ່ ຕາມກົດໝາຍໄດ້ກຳນົດໄວ້ ເປັນຕົ້ນ ຫົວໜ່ວຍທີ່ມີລາຍຮັບປະຈຳປີ 50 ລ້ານກີບລົງມາ, ລາຍຮັບປະຈຳປີ ແຕ່ 50 ລ້ານ - 400 ລ້ານກີບຕໍ່ປີ ແລະ ລາຍຮັບປະຈຳປີ ເກີນກວ່າ 400 ລ້ານກີບຕໍ່ປີ ເພື່ອຮັບປະກັນບໍ່ໃຫ້ເກີດຊ່ອງວ່າງໃນການຈັດປະເພດຫົວໜ່ວຍທຸລະກິດທີ່ຖືກຍົກເວັ້ນ. ຫົວໜ່ວຍຈຸນລະວິສາຫະກິດ ແລະ ຫົວໜ່ວຍທີ່ເຂົ້າລະບົບອາກອນມູນຄ່າເພີ່ມ ຕ້ອງຖືບັນຊີໃຫ້ຖືກຕ້ອງ ແລະ ເປັນເຈົ້າການດ້ວຍຕົນເອງໃນການຄິດໄລ່, ແຈ້ງມອບ ແລະ ຊຳລະພັນທະອາກອນປະເພດຕ່າງໆ ເຂົ້າງົບປະມານຢ່າງຄົບຖ້ວນ, ເຂັ້ມງວດ, ທັນເວລາ ແລະ ໂປ່ງໃສ ຜ່ານເຄື່ອງມືຄຸ້ມຄອງແບບທັນສະໄໝ;

2) ອອກນະໂຍບາຍ ເພື່ອຊຸກຍູ້, ສົ່ງເສີມ ຜູ້ດຳເນີນທຸລະກິດ ທີ່ເຂົ້າສູ່ລະບົບອາກອນມູນຄ່າເພີ່ມ ແລ້ວ ສ້າງສິ່ງອຳນວຍຄວາມສະດວກຕ່າງໆ ຕາມລະບຽບການ ແລະ ສ້າງນະໂຍບາຍໃໝ່ ເພື່ອ ສ້າງສິ່ງຈູງໃຈໃຫ້ຜູ້ທີ່ຍັງບໍ່ທັນໄດ້ເຂົ້າສູ່ລະບົບອາກອນມູນຄ່າເພີ່ມ ໃຫ້ມີຄວາມຕື່ນຕົວເຂົ້າສູ່ ລະບົບ ແລະ ມີກົນໄກການບັງຄັບໃຊ້ກົດໝາຍຕໍ່ຜູ້ທີ່ລະເມີດຢ່າງເຂັ້ມງວດ;

3) ອອກນິຕິກຳ ບັງຄັບໃຫ້ຫົວໜ່ວຍທຸລະກິດ ນຳໃຊ້ໃບເກັບເງິນເປັນເຈ້ຍ ຫຼື ໃບເກັບເງິນເອເລັກ ໂຕຣນິກ (e-Invoice) ຕາມຮູບແບບທີ່ກະຊວງການເງິນກຳນົດ ເພື່ອຮັບປະກັນການປະຕິບັດ ພັນທະຕ່າງໆ ໃຫ້ຖືກຕ້ອງຕາມກົດໝາຍ;

4) ປະສານສົມທົບກັບ ກະຊວງປ້ອງກັນຄວາມສະຫງົບ, ກະຊວງພາຍໃນ ແລະ ອົງການປະກັນສັງ ຄົມແຫ່ງຊາດ ເພື່ອຊຸກຍູ້ສົ່ງເສີມໃຫ້ບຸກຄົນ ແລະ ນິຕິບຸກຄົນ ທີ່ມີລາຍໄດ້ ຕ້ອງອອກເລກປະຈຳ ຕົວຜູ້ເສຍອາກອນ ແລະ ແຈ້ງມອບອາກອນລາຍໄດ້ຕາມກົດໝາຍວ່າດ້ວຍອາກອນລາຍໄດ້;

5) ປະສານສົມທົບກັບຂະແໜງການຂັ້ນ ສູນກາງ ແລະ ທ້ອງຖິ່ນ ທີ່ມີການຈັດເກັບຄ່າທຳນຽມ ບໍ່ລວມລາຍຮັບວິຊາການ ເພື່ອເພີ່ມທະວີການຄຸ້ມຄອງລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ ໃຫ້ ຖືກຕ້ອງຕາມນິຕິກຳທີ່ໄດ້ກຳນົດໄວ້. ພ້ອມທັງຫັນການແຈ້ງມອບຜ່ານລະບົບ TaxRIS ແລະ ຊຳລະຜ່ານທະນາຄານ ແລະ ກົນໄກການມອບໃຫ້ໂປ່ງໃສ.

4.3. ສົມທົບກັບກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອກຳນົດມາດຕະການຄຸ້ມຄອງການນຳເຂົ້າ-ສົ່ງອອກ ແລະ ການຈຳໜ່າຍ ສິນຄ້ານຳເຂົ້າຢູ່ພາຍໃນປະເທດ ດັ່ງນີ້:

4.3.1. ປັບປຸງ ແລະ ແກ້ໄຂ ລະບົບການແຈ້ງ, ການມອບ, ການກວດກາ ການນຳເຂົ້າ ນ້ຳມັນເຊື້ອໄຟ ແລະ ນ້ຳມັນຫຼໍ່ລື່ນ ຜ່ານດ່ານພາສີຊາຍແດນ ແລະ ການເຄື່ອນຍ້າຍພາຍໃນປະເທດ ຢ່າງຮັດກຸມ, ອັດທຸກຊ່ອງວ່າງຜ່ານມາຢ່າງຂາດຕົວ ເພື່ອຮັບປະກັນໃຫ້ຂະແໜງຄຸ້ມຄອງລາຍຮັບ ສາມາດເກັບ ລາຍຮັບພາສີ, ອາກອນຕ່າງໆ ຈາກທຸກຂັ້ນຕອນ ການນຳເຂົ້າ, ການເຄື່ອນຍ້າຍ, ຂາຍຍົກ, ຂາຍຍ່ອຍ ໃຫ້ຄົບຖ້ວນ;

4.3.2. ປັບປຸງ, ແກ້ໄຂ ແລະ ດັດສົມ ຫົວໜ່ວຍທຸລະກິດ ທີ່ນຳເຂົ້າ ແລະ ຈຳໜ່າຍ ສິນຄ້າປະເພດຕ່າງໆ ໃຫ້ຈະແຈ້ງ, ລະອຽດ ເພື່ອສະໜອງຢູ່ພາຍໃນປະເທດ ເປັນຕົ້ນ ວັດສະດຸກໍ່ສ້າງ, ເຄື່ອງໃຊ້ໄຟຟ້າ, ສິນຄ້າອຸປະໂພກ-ບໍລິໂພກ ໃຫ້ປະຕິບັດຕາມກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ດັ່ງນີ້:

1) ຕ້ອງມີລະບົບສາງທີ່ໄດ້ມາດຕະຖານ ຕາມການອະນຸຍາດທີ່ໄດ້ອອກໃຫ້ໃນໃບທະບຽນວິສາຫະ ກິດ ແລະ ສາມາດດຳເນີນການບໍລິການສາງສິນຄ້າລວມ ສຳລັບວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ທີ່ບໍ່ສາມາດສ້າງສາງໄດ້ ແລະ ຕ້ອງແຈ້ງສິນຄ້າທີ່ນຳເຂົ້ານັ້ນຈົ່ງຢູ່ໃນສາງໃດ ເພື່ອໃຫ້ ຖືກຕ້ອງ ແລະ ສາມາດກວດສອບໄດ້;

2) ບັນດາຫົວໜ່ວຍທຸລະກິດທີ່ປະຕິບັດຄົບຖ້ວນເງື່ອນໄຂ ທີ່ລັດຖະບານ ວາງອອກຈະປະຕິບັດ ນະໂຍບາຍຊຸກຍູ້ສົ່ງເສີມໃນຫຼາຍຮູບແບບ ແລະ ຖ້າບໍ່ຄົບເງື່ອນໄຂໃຫ້ປະຕິບັດມາດຕະການ ດັ່ງນີ້:

- ໃຫ້ສ້າງຕົວແບບບໍລິສັດທີ່ເຄື່ອນໄຫວຄົບຖ້ວນຕາມມາດຕະຖານ ແລະ ເງື່ອນໄຂຕ່າງໆ ເພື່ອເປັນ ຕົວແບບໃນການນຳເຂົ້າ ແລະ ຈຳໜ່າຍ ສິນຄ້າປະເພດຕ່າງໆ ດ້ວຍນະໂຍບາຍ ແລະ ສິ່ງຈູງໃຈ ຕ່າງໆ ທີ່ກົດໝາຍກຳນົດ ເພື່ອດັດສົມບັນດາຫົວໜ່ວຍທຸລະກິດ ທີ່ເຄື່ອນໄຫວບໍ່ຖືກຕ້ອງ, ຫຼົບ ຫຼີກພັນທະພາສີ-ອາກອນໃຫ້ເດັດຂາດ;
- ສ້າງລະບຽບການຄຸ້ມຄອງຢ່າງຄົບຊຸດ ກ່ຽວກັບການນຳເຂົ້າ ແລະ ຈຳໜ່າຍ ສິນຄ້າອຸປະໂພກ-ບໍລິໂພກ ເພື່ອເຮັດໃຫ້ການແຈ້ງ-ການມອບພາສີ-ອາກອນຖືກຕ້ອງ ແລະ ອັດຊ່ອງວ່າງ ດ້ວຍການ ລົບລ້າງການແຈ້ງພາສີດ້ວຍບຸກຄົນ (ການແຈ້ງເສຍພາສີຍ່ອຍ ໃນລະບອບ SD4) ຢູ່ດ່ານພາສີຊາຍ

ແດນ ໂດຍໃຫ້ຫັນໄປແຈ້ງພາສີເປັນລາຍລະອຽດ ໃນຮູບແບບການນຳເຂົ້າຂອງບໍລິສັດ ຫຼື ນິຕິບຸກຄົນ ຕາມກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຢ່າງເຂັ້ມງວດ;

- ສ້າງກົນໄກ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງສາງສິນຄ້າ ແລະ ການເຄື່ອນຍ້າຍສິນຄ້າ ຈາກການນຳເຂົ້າຢູ່ພາຍໃນປະເທດ ຂອງນິຕິບຸກຄົນທີ່ດຳເນີນທຸລະກິດການນຳເຂົ້າ ແລະ ສົ່ງອອກ ເຊັ່ນ: ຕ້ອງມີສາງສິນຄ້າຂອງ ບຸກຄົນ, ນິຕິບຸກຄົນ ຕາມກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ກຳນົດ, ມີລະບົບບັນຊີສາງ, ນຳໃຊ້ເອກະສານການເຄື່ອນຍ້າຍຂອງຂະແໜງສ່ວຍສາອາກອນ ປະກາດໃຊ້ໃນແຕ່ລະໄລຍະ;
- ດຳເນີນການ ຍຸບເລີກ ແລະ ລົບລ້າງ ຜູ້ແຈ້ງພາສີທີ່ເປັນບຸກຄົນ, ນິຕິບຸກຄົນ ທີ່ເຄື່ອນໄຫວບໍ່ຖືກຕ້ອງ ມີການສົມຮູ້ຮ່ວມຄິດກັບເຈົ້າໜ້າທີ່ໃນການຫຼົບຫຼີກພາສີ ແລະ ການຄ້າຂາຍເຖື່ອນ ແລະ ໃຫ້ຫັນການແຈ້ງພາສີ ເປັນ ນິຕິບຸກຄົນ ເພື່ອໃຫ້ມີລະບົບການຄໍ້ປະກັນຕໍ່ລັດຖະການພາສີ ໃນກໍລະນີມີການລະເມີດກົດໝາຍວ່າດ້ວຍພາສີ, ກົດໝາຍອື່ນໆ ແລະ ນິຕິກຳທີ່ກ່ຽວຂ້ອງ;
- ໃຫ້ດຳເນີນມາດຕະການບັງຄັບໃຊ້ກົດໝາຍ ໂດຍໂຈະການນຳເຂົ້າ-ສົ່ງອອກຊົ່ວຄາວ ເພື່ອປັບປຸງໃຫ້ສອດຄ່ອງກັບເງື່ອນໄຂພາຍໃນກຳນົດເວລາ 3 ເດືອນ, ກໍລະນີບໍ່ປະຕິບັດ ໃຫ້ໂຈະ ແລະ ຖອນໃບທະບຽນວິສາຫະກິດ ແລະ ໃບອະນຸຍາດການດຳເນີນທຸລະກິດຖາວອນ ຕາມມາດຕະການທີ່ກົດໝາຍກຳນົດ;
- ປັບປຸງ ແລະ ຍົກສູງປະສິດທິພາບຂອງການຈັດຕັ້ງ ແລະ ການເຄື່ອນໄຫວ ວຽກງານກວດກາ, ສືບສວນ-ສອບສວນ, ຕ້ານການຄ້າຂາຍເຖື່ອນທຸກຮູບແບບ ແລະ ການລັກລອບຊັບສິນຂອງລັດ, ການປະຕິບັດຂໍ້ຜູກພັນສັນຍາ ເພື່ອຮັບປະກັນການບັງຄັບໃຊ້ກົດໝາຍ ໃຫ້ມີປະສິດທິຜົນ ແລະ ນຳໃຊ້ໄດ້ຢ່າງເດັດຂາດ.

4.4. ສົມທົບກັບ ກະຊວງແຜນການ ແລະ ການລົງທຶນ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ບັນດາຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງ ກ່ຽວກັບ ການຄຸ້ມຄອງລາຍຮັບຈາກ ຊັບພະຍາກອນທຳມະຊາດ, ພະລັງງານ ແລະ ບໍ່ແຮ່ ເພື່ອປັບປຸງລະບຽບການ, ກົນໄກການປະສານສົມທົບ ເລີ່ມແຕ່ຂອດຄຸ້ມຄອງ ອະນຸຍາດ, ສັນຍາ, ຊອກຄົ້ນ, ສຳຫຼວດ, ສ້າງບົດວິພາກ ແລະ ຂຸດຄົ້ນ, ຈຳໜ່າຍ, ສົ່ງອອກ ແລະ ການປະຕິບັດພັນທະຕ່າງໆ ໃນແຕ່ລະຂອດ ຄື:

4.4.1. ສ້າງກົນໄກ ແລະ ລະບຽບການ ກ່ຽວກັບວິທີການໄລ່ລຽງຫົວໜ່ວຍທຸລະກິດ ທີ່ຕິດພັນກັບຂະແໜງການບໍ່ແຮ່, ເຂື່ອນໄຟຟ້າ ທີ່ຜ່ານມາໃຫ້ສອດຄ່ອງກັບນິຕິກຳໄດ້ກຳນົດໄວ້, ພ້ອມທັງເລັ່ງທວງຫົວໜ່ວຍທຸລະກິດທີ່ມີໜີ້ຕ້ອງມອບເງິນເຂົ້າງົບປະມານໃຫ້ຄົບຖ້ວນ;

4.4.2. ປັບປຸງ ລັດຖະບັນຍັດ ວ່າດ້ວຍປະເພດສິນຄ້າ ແລະ ອັດຕາພາສີຂາອອກ ສະບັບເລກທີ 002/ປປທ, ລົງວັນທີ 27 ເມສາ 2012 ສຳລັບການສົ່ງອອກແຮ່ທາດ, ຊັບພະຍາກອນທຳມະຊາດທີ່ເປັນວັດຖຸດິບ ທີ່ບໍ່ໄດ້ຜ່ານຂະບວນການຜະລິດ ຫຼື ປຸງແຕ່ງເປັນຜະລິດພັນສຳເລັດຮູບ;

4.4.3. ປັບປຸງລັດຖະບັນຍັດ ວ່າດ້ວຍຄ່າເຊົ່າ ແລະ ຄ່າສຳປະທານ ສະບັບເລກທີ 02/ປປທ, ລົງວັນທີ 18 ພະຈິກ 2009 ແລະ ນິຕິກຳຕ່າງໆ ທີ່ເຫັນວ່າຈຳເປັນ ເພື່ອຍົກສູງປະສິດທິພາບໃນການຄຸ້ມຄອງ.

4.5. ສ້າງ ແລະ ປັບປຸງກົນໄກການຊຸກຍູ້ ແລະ ສົ່ງເສີມ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ, ກາງ ແລະ ໃຫຍ່ ໃຫ້ຖືບັນຊີ ໃຫ້ຖືກຕ້ອງ, ຄົບຖ້ວນ ຕາມກົດໝາຍບັນຊີ ແລະ ລະບຽບການທີ່ກ່ຽວຂ້ອງ ດັ່ງນີ້:

4.5.1. ກຳນົດນະໂຍບາຍ ເພື່ອສົ່ງເສີມ ແລະ ສ້າງແຮງຈູງໃຈ ໃຫ້ຫົວໜ່ວຍທຸລະກິດຖືບັນຊີ ຕາມມາດຕະຖານການບັນຊີ;

4.5.2. ເພີ່ມທະວີຍົກລະດັບຄວາມຮູ້ຄວາມສາມາດທາງດ້ານວຽກງານບັນຊີ ໃຫ້ພະນັກງານບັນຊີຂອງບັນດາຫົວໜ່ວຍທຸລະກິດໃນຂອບເຂດທົ່ວປະເທດ ໃຫ້ເຂັ້ມແຂງ ແລະ ບຳລຸງສ້າງນັກບັນຊີລາວໃຫ້ມີຄຸນນະພາບ;

4.5.3. ຄຸ້ມຄອງ, ກວດກາ, ປະເມີນ ແລະ ດັດສົມ ບັນດາບໍລິສັດບໍລິການບັນຊີ (ບໍລິສັດທີ່ປຶກສາບັນຊີ) ແລະ ບໍລິສັດກວດສອບ ໃຫ້ປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຢ່າງເຄັ່ງຂັດ ແລະ ສ້າງສິ່ງຈູງໃຈໃຫ້ບໍລິສັດທີ່ປຶກສາດ້ານການບັນຊີ ແລະ ກວດສອບ ເປັນຜູ້ຕາງໜ້າຕົວແທນຂອງພາກລັດ ເພື່ອສົ່ງເສີມ ແລະ ແນະນຳໃຫ້ຫົວໜ່ວຍທຸລະກິດ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງໃຫ້ຖືບັນຊີ ແລະ ສ້າງບົດລາຍງານການເງິນ ແລະ ບັນຊີ ໃຫ້ຖືກຕ້ອງຕາມມາດຕະຖານ;

4.5.4. ສົມທົບກັບຂະແໜງອຸດສະຫະກຳ ແລະ ການຄ້າ, ຂະແໜງແຜນການ ແລະ ການລົງທຶນ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ແລະ ຂະແໜງການອື່ນ ໃນການຄຸ້ມຄອງ, ຊຸກຍູ້ ແລະ ມີມາດຕະການໃຫ້ຖືບັນຊີ ຕາມລະບຽບການອະນຸຍາດດຳເນີນທຸລະກິດ;

4.5.5. ສ້າງນະໂຍບາຍໃໝ່ ແລະ ກົນໄກມາດຕະການ ເພື່ອໃຫ້ຫົວໜ່ວຍທຸລະກິດຖືບັນຊີ ຕາມມາດຕະຖານການບັນຊີ ແລະ ບົດລາຍງານການເງິນ ປະຈຳປີຕາມມາດຕະຖານລາຍງານການເງິນ, ເດັດຂາດແກ້ໄຂການຖືບັນຊີ 2 ລະບົບ (ຫ້າມນຳໃຊ້ຫຼາຍມາດຕະຖານບັນຊີໃນໜຶ່ງຫົວໜ່ວຍຖືບັນຊີ) ທີ່ເຈົ້າໜ້າທີ່ຂອງລັດ, ບໍລິສັດບໍລິການບັນຊີ ແລະ ກວດສອບ, ບຸກຄົນ ແລະ ນິຕິບຸກຄົນ ສົມຮູ້ຮ່ວມຄິດສ້າງຂຶ້ນ ເພື່ອຈຸດປະສົງຫຼົບຫຼີກພັນທະເຂົ້າງົບປະມານແຫ່ງລັດ ໃນທຸກຮູບແບບ ເຊັ່ນ: ຈຸດປະສົງແຈ້ງພັນທະບໍ່ຖືກຕ້ອງ, ປິດບັງ ແລະ ເຊື່ອງອຳ.

4.6. ຄົ້ນຄວ້ານະໂຍບາຍ, ນິຕິກຳ ແລະ ມາດຕະການ ເພື່ອຂະຫຍາຍຖານລາຍຮັບ ໃນຂົງເຂດອາກອນທີ່ດິນ, ອາກອນລາຍໄດ້ບຸກຄົນ ແລະ ອາກອນສິ່ງແວດລ້ອມ ແລະ ອາກອນອື່ນໆ;

4.7. ສືບຕໍ່ປັບປຸງລະບົບການຄຸ້ມຄອງການເງິນພາກລັດ ໂດຍທັນຈາກລະບົບທີ່ມີຢູ່ແລ້ວ ໄປສູ່ລະບົບດິຈິຕອນ ເພື່ອເຊື່ອມໂຍງກັບລະບົບການຄຸ້ມຄອງເສດຖະກິດດິຈິຕອນຂອງລັດຖະບານ;

4.8. ດຳເນີນການປະຕິຮູບລັດວິສາຫະກິດ ທີ່ເປັນຍຸດທະສາດ ແລະ ບໍ່ເປັນຍຸດທະສາດ ຢ່າງມີຈຸດສຸມ, ສ້າງຄວາມເຂັ້ມແຂງໃຫ້ລັດວິສາຫະກິດດ້ວຍຮູບແບບລັດລົງທຶນກັບເອກະຊົນ ໂດຍການຄົ້ນຄວ້າທັນຊັບສິນ ແລະ ຮຸ້ນຂອງລັດ ໃນວິສາຫະກິດລັດລົງທຶນເປັນທຶນ ແລະ ປັບປຸງລັດວິສາຫະກິດທີ່ຂາດທຶນ ໂດຍການທັນໜີ້ຂອງລັດເປັນທຶນໃຫ້ເອກະຊົນມາຖືຮຸ້ນ ແລະ ພ້ອມທັງຍົກເລີກຫົວໜ່ວຍໃດທີ່ຂາດທຶນ ເພື່ອຫຼຸດຜ່ອນການແບກຫາບໜີ້ສິນ, ສ້າງນິຕິກຳ ແລະ ລະບົບ ເພື່ອຄຸ້ມຄອງ, ກວດກາ ແລະ ປະເມີນຜົນການບໍລິຫານຂອງ ສະພາບໍລິຫານ ແລະ ຄະນະອຳນວຍການ ເພື່ອເຮັດໃຫ້ວິສາຫະກິດຂອງລັດເຄື່ອນໄຫວໄດ້ຢ່າງມີປະສິດທິຜົນ. ພ້ອມທັງ ສ້າງລະບຽບການປະເມີນຜົນຜູ້ບໍລິຫານລັດວິສາຫະກິດ ເພື່ອກ້າວໄປສູ່ການສ້າງຜູ້ບໍລິຫານມືອາຊີບມາບໍລິຫານ, ມີມາດຕະການສົ່ງເສີມ ແລະ ປະຕິບັດວິໄນຢ່າງເດັດຂາດຕໍ່ຜູ້ບໍລິຫານ;

4.9. ດຳເນີນການປະຕິຮູບລະບົບກົງຈັກ ແລະ ບຸກຄະລາກອນ ຄຸ້ມຄອງລາຍຮັບງົບປະມານແຫ່ງລັດ ໃຫ້ກະທັດຮັດ, ສົມເຫດສົມຜົນ, ໂລ່ງລ່ຽນ, ມີປະສິດທິພາບ, ທັນສະໄໝ ເພື່ອໃຫ້ການຄຸ້ມຄອງບັນຊາ ໃນການເກັບລາຍຮັບເຂົ້າງົບປະມານແຫ່ງລັດໃຫ້ຄົບຖ້ວນ, ທັນເວລາ, ໂປ່ງໃສ, ມີປະສິດທິພາບສູງ ແຕ່ສູນກາງລົງຮອດທ້ອງຖິ່ນ, ເດັດຂາດແກ້ໄຂປະກົດການຫຍໍ້ທໍ້ໃນການຈັດເກັບລາຍຮັບຢ່າງເຂັ້ມງວດ. ພ້ອມທັງ, ປະຕິບັດນະໂຍບາຍຕໍ່ພະນັກງານ-ລັດຖະກອນທີ່ຈັດຕັ້ງປະຕິບັດໜ້າທີ່ໄດ້ດີ ແລະ ນຳໃຊ້ມາດຕະການຢ່າງເດັດຂາດຕໍ່ພະນັກງານ-ລັດຖະກອນປະຕິບັດຜິດກົດໝາຍ.

5. ກະຊວງແຜນການ ແລະ ການລົງທຶນ ຮັບຜິດຊອບເປັນເຈົ້າການ:

5.1. ມີມາດຕະການບັງຄັບ ບັນດາໂຄງການ ທີ່ໄດ້ອະນຸຍາດ ໃນການເຊົ່າ-ສຳປະທານ ທີ່ໄດ້ດຳເນີນການຂຸດຄົ້ນ, ປຸງແຕ່ງ ໃນຂົງເຂດພະລັງງານ, ບໍ່ແຮ່ ເພື່ອປະຕິບັດພັນທະຈາກຄ່າຊັບພະຍາກອນ, ຄ່າເຊົ່າ-ສຳປະທານ, ຄ່າ

ພາສຫຼວງ, ອາກອນປະເພດຕ່າງໆ ເຂົ້າງົບປະມານໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການກຳນົດ ຕາມໃບອະນຸຍາດສຳປະທານທີ່ຂະແໜງການອອກໃຫ້;

5.2. ມີມາດຕະການບັງຄັບ ບັນດາຫົວໜ່ວຍ ເຂດເສດຖະກິດພິເສດ, ກິດຈະການຄາຊິໂນ ໃນການມອບພັນທະເຂົ້າງົບປະມານແຫ່ງລັດ ຕາມສັນຍາໃຫ້ຄົບຖ້ວນ ແລະ ທັນຕາມກຳນົດເວລາ ຕາມສັນຍາສຳປະທານ;

5.3. ກວດກາ ແລະ ທົບທວນຄືນ ບັນດາສັນຍາເຊົ່າ-ສຳປະທານ ໃນການສຳຫຼວດ, ຂຸດຄົ້ນ ທີ່ບໍ່ທັນຈັດຕັ້ງປະຕິບັດ ຫຼື ປະຕິບັດບໍ່ໄປຕາມສັນຍາ ເພື່ອເລັ່ງທວງໃຫ້ດຳເນີນຕາມສັນຍາ ໃນກໍລະນີ ບໍ່ປະຕິບັດໃຫ້ຍົກເລີກສັນຍາເຊົ່າ-ສຳປະທານ ແລ້ວຊອກຜູ້ພັດທະນາໃໝ່ ເຂົ້າມາດຳເນີນການແທນ ແລະ ໃຫ້ຍຶດເອົາເງິນຄ້ຳປະກັນສັນຍາຕາມທີ່ລະບຸໄວ້ໃນສັນຍາ ເຂົ້າງົບປະມານແຫ່ງລັດຢ່າງຄົບຖ້ວນ;

5.4. ກວດກາ ແລະ ປັບປຸງຄືນ ບັນດາສັນຍາເຊົ່າ-ສຳປະທານ ທີ່ມີເນື້ອໃນບໍ່ຊັດເຈນ, ມີຂໍ້ຂັດແຍ່ງ ແລະ ມີຊ່ອງວ່າງ ໃນການມອບພັນທະເຂົ້າງົບປະມານ ຕາມກົດໝາຍ ແລະ ນິຕິກຳໃຕ້ກົດໝາຍໃຫ້ຊັດເຈນ, ຄົບຖ້ວນ, ຖືກຕ້ອງ; ເຂັ້ມງວດປະຕິບັດມາດຕະການປັບໃໝ ແລະ ຖອນສິດ ຕໍ່ຜູ້ທີ່ລະເມີດ ແລະ ບຸກລຸກ ເນື້ອທີ່ທີ່ບໍ່ໄດ້ຮັບການອະນຸຍາດ;

5.5. ເປັນເຈົ້າການສົມທົບກັບຂະແໜງການເງິນ ແລະ ຂະແໜງການທີ່ກ່ຽວຂ້ອງ ເພື່ອເຈລະຈາກັບບັນດາຫົວໜ່ວຍທຸລະກິດຂົງເຂດບໍ່ແຮ່ ແລະ ພະລັງງານ ເພື່ອສ້າງກົນໄກໃນການມອບພັນທະໃຫ້ລັດຖະບານ ໃນຊ່ວງທີ່ມີຄວາມຫຍຸ້ງຍາກທາງດ້ານການເງິນ;

5.6. ເປັນເຈົ້າການສົ່ງຂໍ້ມູນສັນຍາ ແລະ ຂໍ້ຜູກພັນທາງດ້ານສັນຍາທັງໝົດ ໃຫ້ຂະແໜງການເງິນ ເພື່ອສ້າງເປັນຂໍ້ມູນຖານລາຍຮັບໃນການຄຸ້ມຄອງການເກັບລາຍຮັບເຂົ້າງົບປະມານໃຫ້ຖືກຕ້ອງ, ຄົບຖ້ວນ, ທັນເວລາ.

6. ກະຊວງອຸດສາຫະກຳ ແລະ ການຄ້າ ຮັບຜິດຊອບ:

6.1. ຊຸກຍູ້ການເຄື່ອນໄຫວຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ເພື່ອເຮັດໜ້າທີ່ຕາມພາລະບົດບາດຢ່າງແຂງແຮງ ໃນການຊຸກຍູ້ການດຳເນີນທຸລະກິດ, ການແກ້ໄຂບັນດາຂອດຂັ້ນສິ່ງອຸດຕັນ ເພື່ອສ້າງບັນຍາກາດໃໝ່ ໃນການດຳເນີນທຸລະກິດໃຫ້ມີຄວາມໂປ່ງໃສ ທະລຸໂລ່ງ ແລະ ສາມາດສ້າງເປັນຖານລາຍຮັບ ທີ່ໝັ້ນຄົງ, ຍາວນານ ຕາມທິດຍືນຍົງ, ສີຂຽວ;

6.2. ດຳເນີນການກວດກາຄືນ ຫົວໜ່ວຍທຸລະກິດ ທີ່ໄດ້ອອກທະບຽນວິສາຫະກິດ ໃນໄລຍະຜ່ານມາ ແລະ ອະນຸຍາດເປີດໃໝ່ ເພື່ອສະໜອງຖານຂໍ້ມູນຂອງຫົວໜ່ວຍທຸລະກິດ ໃຫ້ຂະແໜງການເງິນ ຕາມລະບົບເຊື່ອມໂຍງເອເລັກໂຕຣນິກ ເພື່ອຕິດຕາມຄຸ້ມຄອງໃນການປະຕິບັດພັນທະຕາມກົດໝາຍ ແລະ ນຳໃຊ້ມາດຕະການຕໍ່ຫົວໜ່ວຍທຸລະກິດ ທີ່ເຄື່ອນໄຫວບໍ່ຖືກຕ້ອງ, ຊຸກຍູ້ການປະຕິບັດນະໂຍບາຍຕ່າງໆ ແລະ ກວດກາ ຫົວໜ່ວຍທຸລະກິດ, ບຸກຄົນ, ນິຕິບຸກຄົນ ເຂົ້າລະບົບອາກອນມູນຄ່າເພີ່ມ, ຖືບັນຊີ ແລະ ສ້າງເອກະສານລາຍງານການເງິນ ຕາມມາດຕະຖານບັນຊີ, ນຳໃຊ້ໃບເກັບເງິນທີ່ຖືກຕ້ອງ, ນຳໃຊ້ເຄື່ອງມືທີ່ທັນສະໄໝໃນການບັນທຶກການຂາຍສິນຄ້າ ແລະ ບໍລິການ ເພື່ອມອບພັນທະໃຫ້ຄົບຖ້ວນ. ພ້ອມທັງ ດຳເນີນການກວດກາການເຄື່ອນໄຫວຂອງຫົວໜ່ວຍທຸລະກິດ ທີ່ເປັນຄົນຕ່າງດ້າວມາດຳເນີນທຸລະກິດ ສະຫງວນ ແລະ ບໍ່ສະຫງວນ ໃຫ້ຂຶ້ນທະບຽນ ແລະ ປະຕິບັດພັນທະເຂົ້າງົບປະມານ ຕາມກົດໝາຍຂອງ ສປປ ລາວ;

6.3. ດຳເນີນການກວດກາ ການຈົດທະບຽນຊັບສິນຂອງວິສາຫະກິດ ທີ່ນຳໃຊ້ເຂົ້າເປັນທຶນຂອງວິສາຫະກິດ ໃຫ້ຖືກຕ້ອງຕາມກົດໝາຍ ເພື່ອບໍ່ໃຫ້ມີຜົນເສຍຫາຍໃນການຄິດໄລ່ ແລະ ມອບ ອາກອນກຳໄລ;

6.4. ສົມທົບກັບຂະແໜງການເງິນ ຄົ້ນຄວ້າກ່ຽວກັບການກຳນົດເງື່ອນໄຂ ແລະ ມາດຕະການບັງຄັບໃຊ້ດ້ານກົດໝາຍໃນການອອກອະນຸຍາດ ຫຼື ຕໍ່ ທະບຽນວິສາຫະກິດ ໂດຍໃຫ້ຫົວໜ່ວຍທຸລະກິດເຫຼົ່ານັ້ນ ຕ້ອງມີ ແລະ ນຳໃຊ້ໃບເກັບເງິນເປັນເຈ້ຍ ຫຼື ໃບເກັບເງິນເອເລັກໂຕຣນິກ (e-Invoice) ຕາມຮູບແບບທີ່ກະຊວງການເງິນກຳນົດ ເພື່ອຮັບປະກັນການປະຕິບັດພັນທະຕ່າງໆ ໃຫ້ຖືກຕ້ອງຕາມກົດໝາຍ;

6.5. ປະສານສົມທົບກັບສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັດສ ເພື່ອດຳເນີນການປະເມີນ ແລະ ກວດກາ ຢ່າງເຂັ້ມງວດ ຕໍ່ຫົວໜ່ວຍທຸລະກິດທີ່ໄດ້ຮັບອະນຸຍາດ ຕາມດຳລັດວ່າດ້ວຍທຸລະກິດນ້ຳມັນເຊື້ອໄຟ ກ່ຽວ ກັບ ທຶນຈົດທະບຽນ, ຊັບສິນຂອງບໍລິສັດ, ການດຳເນີນທຸລະກິດ ໃນຂົງເຂດ ນ້ຳມັນເຊື້ອໄຟ ເລີ່ມແຕ່ຂອດ ອະນຸຍາດ, ໂກຕາ, ມາດຕະຖານລະບົບສາງ, ການນຳເຂົ້າ ຈົນຮອດ ມາດຕະຖານລະບົບປ້ຳນ້ຳມັນ ໂດຍນຳ ໃຊ້ເຄື່ອງມືທັນສະໄໝ ເພື່ອໃຫ້ສາມາດກວດກາສິ້ນເຂົ້າ-ສິ້ນອອກ ນ້ຳມັນເຊື້ອໄຟລະຫວ່າງຜູ້ນຳເຂົ້າ ແລະ ຜູ້ຈຳໜ່າຍພາຍໃນ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ໂປ່ງໃສ ໂດຍບໍ່ໃຫ້ເກີດຊ່ອງວ່າງໃນການຫຼົບຫຼີກພັນທະ ຕ່າງໆເຂົ້າງົບປະມານ;

6.6. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ໂຄສະນາ ໃຫ້ຫົວໜ່ວຍທຸລະກິດຕິດປະກາດລາຄາສິນຄ້າ ແລະ ຄ່າ ບໍລິການເປັນເງິນກີບ ຢ່າງເປັນປົກກະຕິ ເພື່ອປົກປ້ອງຜູ້ບໍລິໂພກ ແລະ ການຄຸ້ມຄອງກວດກາຂອງເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

6.7. ດຳເນີນການກວດກາ ແລະ ຄຸ້ມຄອງ ອຸດສາຫະກຳໄມ້, ຫົວໜ່ວຍທຸລະກິດໄມ້, ຮ້ານຈຳໜ່າຍໄມ້, ຮ້ານ ເຟີນິເຈີ ເພື່ອສະໜອງຂໍ້ມູນໃຫ້ຂະແໜງການເງິນ. ພ້ອມທັງ ສ້າງລະບົບການບໍລິການຜູ້ຜະລິດ ແລະ ບໍລິການ ໃນຜະລິດຕະພັນໄມ້ ເພື່ອສ້າງຖານການສົ່ງອອກຕາມຄວາມຕ້ອງການຂອງຕະຫຼາດ, ຄຸ້ມຄອງ ທຸລະກິດໄມ້ ໃຫ້ເຂັ້ມງວດ;

6.8. ຊຸກຍູ້ ໃຫ້ຫົວໜ່ວຍທຸລະກິດ ປະຕິບັດການເສຍອາກອນລາຍໄດ້ຈາກ ການໂອນຮຸ້ນ ຫຼື ປ່ຽນແປງຜູ້ຖືຮຸ້ນ ຕາມກົດໝາຍວ່າດ້ວຍອາກອນລາຍໄດ້ ກຳນົດ;

6.9. ສ້າງກົນໄກ ຮ່ວມກັບຂະແໜງການເງິນ, ທະນາຄານ, ເພື່ອສ້າງຖານລາຍຮັບໃໝ່ ຈາກຂົງເຂດທຸລະກິດຂະ ໜາດນ້ອຍ ແລະ ກາງ ແລະ ຈຸນລະວິສາຫະກິດ ໃຫ້ເປັນລະບົບ ເພື່ອສົ່ງເສີມການຜະລິດນຳໃຊ້ພາຍໃນ, ທົດແທນການນຳເຂົ້າ ແລະ ເພື່ອສົ່ງອອກ;

6.10. ສະໜອງຂໍ້ມູນກ່ຽວກັບ ໃນການນຳເຂົ້າ ແລະ ສົ່ງອອກ ຄຳຮຸບປະພັນ, ຄຳແຫ່ງ ແລະ ວັດຖຸມີຄ່າປະເພດ ຕ່າງໆ ໃຫ້ຂະແໜງການເງິນ.

7. ທະນາຄານ ແຫ່ງ ສປປ ລາວ ຮັບຜິດຊອບ:

7.1. ຄຸ້ມຄອງ ແລະ ສະໜອງຂໍ້ມູນ ກ່ຽວກັບ ການຊຳລະສະສາງ ລວມທັງ ບັນຊີສຳຮອງເງິນຝາກທະນາຄານ ຜ່ານລະບົບທະນາຄານ ຂອງ ບຸກຄົນ ແລະ ນິຕິບຸກຄົນ ຕາມກົດໝາຍກຳນົດ ເພື່ອສະໜອງໃຫ້ ຂະແໜງ ການເງິນ ໃນເວລາມີການສະເໜີຂໍເພື່ອກວດກາໄລ່ລຽງການມອບພັນທະເຂົ້າງົບປະມານແຫ່ງລັດ ແລະ ການນຳເຂົ້າ-ສົ່ງອອກ ສິນຄ້າເຄື່ອງຂອງ;

7.2. ຄຸ້ມຄອງ ແລະ ດັດສົມ ຮ້ານແລກປ່ຽນເງິນຕາ ແລະ ຊຸກຍູ້ໃຫ້ຖືບັນຊີ ຕາມມາດຕະຖານບັນຊີ.

8. ກະຊວງພະລັງງານ ແລະ ບໍ່ແຮ່ ຮັບຜິດຊອບ:

8.1. ສະໜອງຂໍ້ມູນ ກ່ຽວກັບ ສັນຍາເຊົ່າ-ສຳປະທານ ແລະ ແຜນສົ່ງອອກແຮ່ທາດ ແລະ ພະລັງງານ ຂອງຫົວ ໜ່ວຍທຸລະກິດທີ່ໄດ້ອອກໃບອະນຸຍາດດຳເນີນທຸລະກິດ ໃນຂົງເຂດພະລັງງານ, ບໍ່ແຮ່, ບໍລິສັດທີ່ປຶກສາຮັບ ເໝົາກໍ່ສ້າງ, ຂຸດຄົ້ນ ໃນຂົງເຂດພະລັງງານ-ບໍ່ແຮ່ ໃຫ້ຂະແໜງການເງິນ. ພ້ອມທັງ ຊຸກຍູ້ໃຫ້ປະຕິບັດ ເງື່ອນໄຂຕາມໃບທະບຽນວິສາຫະກິດ ຄື: ຖືບັນຊີ, ປະຕິບັດຕາມກົດໝາຍກຳນົດຢ່າງຖືກຕ້ອງ ແລະ ປະ ກອບສ່ວນໃນການພັດທະນາປະເທດຊາດ ຈາກການນຳໃຊ້ຊັບສິນຂອງວິຖະນະຍາດແຫ່ງຊາດ ລວມທັງ ການສະໜອງລາຄາການຈຳໜ່າຍແຮ່ແຕ່ລະປະເພດ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ຄົບຖ້ວນ ເພື່ອເປັນ ຂໍ້ມູນໃນການໄລ່ລຽງພັນທະເຂົ້າງົບປະມານແຫ່ງລັດ;

8.2. ສ້າງກົນໄກ ຮ່ວມກັບຂະແໜງການເງິນ ໃນການຄຸ້ມຄອງການສົ່ງອອກ-ນຳເຂົ້າ ເຂັ້ມງວດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ. ໃນກໍລະນີ ມີການລະເມີດສັນຍາ ແລະ ບໍ່ປະຕິບັດພັນທະ ໃຫ້ດຳເນີນການ ບັງຄັບໃຊ້ຕາມກົດໝາຍກຳນົດໃຫ້ທັນການ;

8.3. ເປັນເຈົ້າການເຈລະນາຄືນໃໝ່ ກັບຫົວໜ່ວຍທຸລະກິດ ຜະລິດ, ຂຸດຄົ້ນ ແລະ ຈຳໜ່າຍ ແຮ່ທາດ ເພື່ອສົ່ງອອກ ເຊັ່ນ: ແຮ່ຄຳ, ແຮ່ເຫຼັກ, ແຮ່ທອງ ແລະ ແຮ່ປະເພດອື່ນທີ່ເຂັ້ມຂຸ້ນ, ແຮ່ທາດຮັບໃຊ້ກິດຈະການກໍ່ສ້າງ, ເກືອໂປຕັດ (ເກືອກາອີ), ຖ່ານຫີນ, ຫີນກາວ ແລະ ອື່ນໆ ເພື່ອເຈລະຈາ, ປະກອບສ່ວນ, ແບ່ງປັນຜົນປະໂຫຍດຄືນໃໝ່, ປະຕິບັດພາສີຂາອອກ ກັບຜູ້ຜະລິດ ແລະ ຜູ້ສົ່ງອອກ ເພື່ອປະກອບສ່ວນແກ້ໄຂສະພາບເສດຖະກິດ-ການເງິນຂອງປະເທດ;

8.4. ເປັນເຈົ້າການປະຕິຮູບລັດວິສາຫະກິດໄຟຟ້າລາວ ປັບປຸງລາຄາຊື້-ຂາຍກະແສໄຟຟ້າ ແລະ ເຈລະຈາປັບປຸງສັນຍາສຳປະທານໂຄງການເຂື່ອນໄຟຟ້າທີ່ມີການຍົກເວັ້ນ ແລະ ບໍ່ສອດຄ່ອງຕາມລະບຽບກົດໝາຍ;

8.5. ຄົ້ນຄວ້າວິທີການຄິດໄລ່ເກັບອາກອນກຳໄລລ່ວງໜ້າຈາກ ການສົ່ງອອກຊັບພະຍາກອນທຳມະຊາດ ເປັນຖ້ຽວ, ຕາມນ້ຳໜັກ ຫຼື ບໍລິມາດສົ່ງອອກຕົວຈິງ ໂດຍໃຫ້ມີການສຶກສາຫາລືກັບຜູ້ປະກອບການ ເພື່ອເປັນເອກະພາບໃນເວລາທີ່ສະພາບເສດຖະກິດ-ການເງິນ ຫຍຸ້ງຍາກ.

9. ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຮັບຜິດຊອບ:

9.1. ສະໜອງຂໍ້ມູນກ່ຽວກັບ ເນື້ອທີ່ດິນ, ກຳນົດເຂດ ໃຫ້ຂະແໜງການເງິນ ເພື່ອເຮັດສັນຍາເຊົ່າ, ຄຸ້ມຄອງສັນຍາເຊົ່າ-ສຳປະທານ ແລະ ຄ່າທຳນຽມ ເພື່ອຄຸ້ມຄອງການຈັດເກັບລາຍຮັບເຂົ້າງົບປະມານຂອງລັດໃຫ້ຄົບຖ້ວນ ແລະ ທັນຕາມກຳນົດເວລາ;

9.2. ດຳເນີນ ໂຄງການອອກໃບຕາດິນ ຕາມແຜນ 5 ປີ ຈຳນວນ 1,6 ລ້ານ ຕອນ ແລະ ຂໍ້ມູນໃບຕາດິນທີ່ມີແລ້ວ ໃຫ້ເປັນຖານຂໍ້ມູນລວມສູນ ເພື່ອເຊື່ອມໂຍງເຂົ້າກັບລະບົບຄຸ້ມຄອງເກັບອາກອນ ແລະ ລະບົບທະນາຄານ ເພື່ອສາມາດຄຸ້ມຄອງໃນການເສຍຄ່າທຳນຽມພາສີທີ່ດິນປະຈຳປີ, ອາກອນລາຍໄດ້ຈາກການຊື້-ຂາຍສິດນຳໃຊ້ ແລະ ໂອນກຳມະສິດ ແລະ ຄ່າທຳນຽມອື່ນໆ ໂດຍການແບ່ງຄວາມຮັບຜິດຊອບການຄຸ້ມຄອງໃຫ້ຈະແຈ້ງ. ສຳລັບອາກອນລາຍໄດ້ຈາກການຊື້-ຂາຍສິດນຳໃຊ້ທີ່ດິນ ມອບໃຫ້ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນເຈົ້າການໄລ່ລ່ຽງ ພ້ອມທັງປະຕິບັດກົນໄກແຈ້ງມອບຜ່ານລະບົບ TaxRIS ແລະ ລະບົບອື່ນ ທີ່ໂປ່ງໃສ, ທັນສະໄໝ;

9.3. ກຳນົດ ເຂດປະເມີນລາຄາທີ່ດິນ ໃນບັນດາຕົວເມືອງໃຫຍ່, ເຂດຊານເມືອງ ແລະ ເຂດຊົນນະບົດ ໃຫ້ສຳເລັດໂດຍໄວ ເພື່ອເປັນຖານຂໍ້ມູນໃນການຄິດໄລ່ ເສຍຄ່າທຳນຽມພາສີທີ່ດິນ, ອາກອນລາຍໄດ້ຈາກຄ່າເຊົ່າ ແລະ ອາກອນລາຍໄດ້ຈາກການຊື້-ຂາຍສິດນຳໃຊ້ ແລະ ໂອນກຳມະສິດ. ໃນກໍລະນີ ຄູ່ສັນຍາຊື້-ຂາຍ ຫາກນຳໃຊ້ລາຄາຕ່ຳກວ່າລາຄາປະເມີນ ແມ່ນໃຫ້ເອົາລາຄາປະເມີນເຂົ້າໃນການສົມທຽບໃນການຄິດໄລ່, ໃນກໍລະນີ ຄູ່ສັນຍາຊື້-ຂາຍ ຫາກຊື້-ຂາຍໃນລາຄາສູງກວ່າລາຄາປະເມີນ ແມ່ນໃຫ້ເອົາລາຄາຊື້-ຂາຍຕົວຈິງ ມາຄິດໄລ່ ເພື່ອຮັບປະກັນຄວາມຖືກຕ້ອງ ແລະ ໂປ່ງໃສ;

9.4. ສົມທົບກັບຂະແໜງການເງິນ ກ່ຽວກັບ ທີ່ດິນລັດ ໃນເຂດເຊົ່າ-ສຳປະທານກໍ່ສ້າງເຂື່ອນ-ໂຮງໄຟຟ້າ, ເຂດສະຖານີ, ເຂດສຳຫຼວດ-ຂຸດຄົ້ນບໍ່ແຮ່ ເພື່ອກຳນົດເປັນແຕ່ເຂດ ແລ້ວສະໜອງຂໍ້ມູນໃຫ້ຂະແໜງການເງິນ ກ່ຽວກັບສັນຍາເຊົ່າ-ສຳປະທານ ເພື່ອຈັດເກັບລາຍຮັບເຂົ້າງົບປະມານ ຕາມກົດໝາຍກຳນົດ;

9.5. ສົມທົບກັບຂະແໜງການເງິນ ເພື່ອກຳນົດກົນໄກຄຸ້ມຄອງເກັບຄ່າຊັບພະຍາກອນນ້ຳທຳມະຊາດ ເຊັ່ນ: ໂຄງການເຂື່ອນໄຟຟ້ານ້ຳຕົກ, ນຳໃຊ້ນ້ຳທຳມະຊາດເຂົ້າໃນເຂດ ອຸດສາຫະກຳ, ບໍ່ແຮ່, ກິດຈະການທ່ອງທ່ຽວ ແລະ ກິລາ ແລະ ການຜະລິດນ້ຳປະປາ ແລະ ນ້ຳດື່ມບໍລິສຸດ ຕາມລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 001/ປປທ, ລົງວັນທີ 15 ທັນວາ 2015 ໃຫ້ຖືກປະຕິບັດຢ່າງເປັນຮູບປະທຳ ແລະ ເຂັ້ມງວດ.

10. ກະຊວງກະສິກຳ ແລະ ປ່າໄມ້ ຮັບຜິດຊອບ ສະໜອງຂໍ້ມູນ ການຫັນປ່ຽນທີ່ດິນປ່າໄມ້ໄປເປັນທີ່ດິນປະເພດອື່ນ, ການຂຸດຄົ້ນເຄື່ອງປ່າຂອງດົງ ແລະ ການສົ່ງອອກ ໃຫ້ຂະແໜງການເງິນ ເພື່ອເປັນຂໍ້ມູນໃນການຄິດໄລ່ຄ່າຊັບພະຍາກອນທຳມະຊາດ ເພື່ອມອບເຂົ້າງົບປະມານແຫ່ງລັດ ຕາມກົດໝາຍ.

11. ກະຊວງແຮງງານ, ສະຫວັດດີການ ແລະ ສັງຄົມ ຮັບຜິດຊອບ:

11.1. ຄຸ້ມຄອງ ແລະ ສະໜອງຂໍ້ມູນ ຈຳນວນແຮງງານ, ສັນຍາແຮງງານ, ພື້ນຖານເງິນເດືອນ ຂອງ ແຮງງານລາວ ແລະ ຕ່າງປະເທດ ທີ່ເຮັດວຽກຢູ່ບັນດາວິສາຫະກິດ, ໂຄງການ, ການຈັດຕັ້ງຕ່າງໆ ໃຫ້ຂະແໜງການເງິນ ເພື່ອເປັນຂໍ້ມູນພື້ນຖານໃນການຄິດໄລ່ອາກອນລາຍໄດ້ ໃຫ້ຖືກຕ້ອງຕາມກົດໝາຍວ່າດ້ວຍແຮງງານ ແລະ ກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ, ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ, ກົດໝາຍວ່າດ້ວຍອາກອນລາຍໄດ້ ແລະ ກົດໝາຍວ່າດ້ວຍອາກອນຊົມໃຊ້ ໃຫ້ຖືກຕ້ອງ ແລະ ໂປ່ງໃສ;

11.2. ຄຸ້ມຄອງ ແລະ ຂຶ້ນທະບຽນ ແຮງງານຕ່າງດ້າວ ເພື່ອສະໜອງຂໍ້ມູນໃຫ້ຂະແໜງການເງິນ ເພື່ອເປັນຖານຂໍ້ມູນໃນການຄິດໄລ່ມອບພັນທະ ຕາມ ກົດໝາຍວ່າດ້ວຍແຮງງານ, ກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ, ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ, ກົດໝາຍວ່າດ້ວຍອາກອນລາຍໄດ້ ແລະ ກົດໝາຍວ່າດ້ວຍອາກອນຊົມໃຊ້.

12. ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຮັບຜິດຊອບ:

12.1. ຄຸ້ມຄອງ ແລະ ປະສານສົມທົບໃນການສະໜອງຂໍ້ມູນ ກ່ຽວກັບສັນຍາເຊົ່າ-ສຳປະທານສະຖານທີ່ທ່ອງທ່ຽວ, ຈຳນວນ ນັກທ່ອງທ່ຽວ ໃຫ້ຂະແໜງການເງິນ ເພື່ອເປັນພື້ນຖານຄິດໄລ່ພັນທະ ແລະ ຄ່າທຳນຽມຕ່າງໆ ເຂົ້າງົບປະມານ;

12.2.ຄຸ້ມຄອງ ແລະ ຊຸກຍູ້ ບັນດາກິດຈະການ ໂຮງແຮມ, ບ້ານພັກ, ຣີສອດ, ຮ້ານອາຫານ, ຮ້ານກິນດື່ມ, ຮ້ານບັນເທີງ, ພັດຕະຄານ, ປ້າຍໂຄສະນາ, ບໍລິສັດທ່ອງທ່ຽວ ແລະ ຊຸກຍູ້ ໃຫ້ວິສາຫະກິດດັ່ງກ່າວ ປະຕິບັດ ກົດໝາຍຂົງເຂດສ່ວຍສາອາກອນ, ກົດໝາຍວ່າດ້ວຍບັນຊີ, ກົດໝາຍວ່າດ້ວຍການຄຸ້ມຄອງຊັບສິນຂອງລັດ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ ເພື່ອປະຕິບັດພັນທະເຂົ້າງົບປະມານຢ່າງຖືກຕ້ອງ ແລະ ໂປ່ງໃສ.

13. ກະຊວງເຕັກໂນໂລຊີ ແລະ ການສື່ສານ ຮັບຜິດຊອບ:

13.1. ຄຸ້ມຄອງ ແລະ ສະໜອງຂໍ້ມູນ ກ່ຽວກັບຄື້ນຄວາມຖີ່ການສື່ສານໂທລະຄົມມະນາຄົມ ແລະ ລິຂະສິດ ເພື່ອສະໜອງໃຫ້ຂະແໜງການເງິນ ໃນການຄິດໄລ່ພັນທະເຂົ້າງົບປະມານແຫ່ງລັດ;

13.2.ຄຸ້ມຄອງ ຊຸກຍູ້ ບັນດາຫົວໜ່ວຍທຸລະກິດ ໂທລະຄົມມະນາຄົມ ແລະ ການສື່ສານ ປະຕິບັດ ກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ, ກົດໝາຍວ່າດ້ວຍອາກອນຊົມໃຊ້, ກົດໝາຍວ່າດ້ວຍອາກອນລາຍໄດ້, ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ, ກົດໝາຍວ່າດ້ວຍພາສີ ແລະ ກົດໝາຍວ່າດ້ວຍຊັບສິນຂອງລັດ ເພື່ອປະຕິບັດພັນທະເຂົ້າງົບປະມານຕາມກົດໝາຍກຳນົດ;

13.3.ສົມທົບກັບຂະແໜງການເງິນ ຄົ້ນຄວ້າ ກ່ຽວກັບ ກົນໄກການນຳເຂົ້າ ໂທລະສັບ, ອຸປະກອນການສື່ສານທຸກຊະນິດ ເພື່ອດຳເນີນການເກັບພາສີ-ອາກອນ ໃຫ້ຖືກຕ້ອງຕາມກົດໝາຍ;

13.4.ສົມທົບກັບຂະແໜງການເງິນ ເພື່ອຫັນເປັນເຕັກໂນໂລຊີການສື່ສານແບບໃໝ່ ເພື່ອຄຸ້ມຄອງລາຍຮັບ ແລະ ສ້າງກົນໄກ ແລະ ລະບົບ ຄຸ້ມຄອງ ການຊື້-ຂາຍສິນຄ້າ ຜ່ານທາງເອເລັກໂຕຣນິກ, ສັ່ງຜ່ານທາງໄປສະນີ, ຜ່ານລະບົບ online ແລະ ການຊຳລະສະສາງສິນຄ້າ ແລະ ບໍລິການ ຜ່ານລະບົບ mobile-banking, M-Money, U-Money ແລະ ລະບົບອື່ນໆ ເພື່ອໃຫ້ສາມາດຄຸ້ມຄອງການຄ້າເອເລັກໂຕຣນິກ ໃຫ້ສາມາດຈັດເກັບລາຍຮັບເຂົ້າງົບປະມານໃຫ້ຄົບຖ້ວນ.

14. ກະຊວງໂຍທາທິການ ແລະ ຂົນສົ່ງ ຮັບຜິດຊອບ:

14.1. ຊຸກຍູ້ ບັນດາບຸກຄົນ ແລະ ນິຕິບຸກຄົນ ທີ່ດຳເນີນທຸລະກິດ ການອອກແບບ, ທີ່ປຶກສາ, ການກໍ່ສ້າງ-ສ້ອມແປງ, ຂົນສົ່ງ, ບໍລິການສາງທ່າບົກ, ໂລຈິສຕິກ ເພື່ອໃຫ້ຫົວໜ່ວຍທຸລະກິດດັ່ງກ່າວ ປະຕິບັດ ກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ, ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ, ກົດໝາຍວ່າດ້ວຍອາກອນລາຍໄດ້ ແລະ ກົດໝາຍວ່າດ້ວຍອາກອນຊົມໃຊ້, ກົດໝາຍວ່າດ້ວຍການບັນຊີ, ກົດໝາຍວ່າດ້ວຍພາສີ ແລະ ກົດໝາຍວ່າດ້ວຍຊັບສິນຂອງລັດ ເພື່ອປະຕິບັດພັນທະເຂົ້າງົບປະມານແຫ່ງລັດ ໃຫ້ຖືກຕ້ອງ, ຄົບຖ້ວນ;

14.2. ສົມທົບກັບ ຂະແໜງການເງິນ ແລະ ພາກສ່ວນກ່ຽວຂ້ອງ ເພື່ອພັດທະນາລະບົບ ສາງທ່າບົກ, ໂລຈິສຕິກ ເພື່ອສ້າງຖານລາຍຮັບໃໝ່ ຕາມທ່າແຮງທີ່ຕັ້ງພູມສາດຂອງປະເທດ;

14.3. ສົມທົບກັບ ຂະແໜງການເງິນ, ຂະແໜງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ດຳເນີນການກວດກາຄືນ ບັນດາພາຫະນະ ທີ່ນຳເຂົ້າບໍ່ຖືກຕ້ອງ ແຕ່ນຳໃຊ້ປ້າຍລັດ, ປ້າຍ ກທ-ປກສ, ປ້າຍ ຂຕ, ປ້າຍ ຊຄ ຫຼື ບໍ່ມີ ປ້າຍ ເພື່ອໃຫ້ມາແຈ້ງ ແລະ ປະຕິບັດພັນທະເຂົ້າງົບປະມານ ໂດຍກຳນົດເວລາໃຫ້ຈະແຈ້ງ ຖ້າພາຍກຳນົດ ເວລາດັ່ງກ່າວ ໃຫ້ດຳເນີນຍຶດເປັນຊັບສິນຂອງລັດ ເພື່ອຂາຍອອກຕາມລະບຽບການ ແລ້ວມອບລາຍຮັບ ເຂົ້າງົບປະມານຕາມກົດໝາຍກຳນົດ;

14.4. ສະໜອງຂໍ້ມູນ ກ່ຽວກັບ ທະບຽນ ປ້າຍ ປະເພດພາຫະນະ ໃຫ້ຂະແໜງການເງິນ ເພື່ອເກັບຄ່າທຳນຽມທາງ ປະຈຳປີ ຜ່ານລະບົບເອເລັກໂຕຣນິກ;

14.5. ປະສານສົມທົບກັບ ຂະແໜງການເງິນ ແລະ ຂະແໜງການກ່ຽວຂ້ອງ ໃນການຄຸ້ມຄອງ, ການຂຸດຄົ້ນ, ການຈຳໜ່າຍ ແລະ ນຳໃຊ້ ຊະນິດດິນ ແລະ ຫີນແຮ່ຕ່າງໆ ເຂົ້າໃນກິດຈະການກໍ່ສ້າງ ເຊັ່ນ: ດິນດຳ, ດິນ ແດງ, ຫີນຜາ ແລະ ສະໜອງຂໍ້ມູນດັ່ງກ່າວໃຫ້ຂະແໜງການເງິນ ເພື່ອເກັບລາຍຮັບເຂົ້າງົບປະມານຕາມກົດ ໝາຍ;

14.6. ເປັນເຈົ້າການ ໃນການກຳນົດລາຄາກາງ ການກໍ່ສ້າງ, ສ້ອມແປງ, ຂົນສົ່ງ, ບໍລິການໃນຂົງເຂດໂຍທາທິການ ແລະ ຂົນສົ່ງຮັບຜິດຊອບ ເພື່ອສະໜອງຂໍ້ມູນໃຫ້ແກ່ພາກສ່ວນກ່ຽວຂ້ອງ ເປັນບ່ອນອີງ ໃນການສົມທຽບ ຄິດໄລ່ ພັນທະປະເພດຕ່າງໆ ເຂົ້າງົບປະມານໃຫ້ຖືກຕ້ອງ ຕາມລະບຽບກົດໝາຍ;

14.7. ປະສານສົມທົບກັບກະຊວງການເງິນ ເພື່ອເຊື່ອມຕໍ່ລະບົບ ແຈ້ງພາສີທາງເອເລັກໂຕຣນິກ (ASYCUDA) ເພື່ອວິເຄາະຂໍ້ມູນ ໃນການນຳເຂົ້າພາຫະນະກ່ອນການຂຶ້ນທະບຽນ ເພື່ອຫຼີກເວັ້ນການປອມແປງເອກະສານ ໄປຂຶ້ນທະບຽນນຳໃຊ້ບໍ່ຖືກຕ້ອງ;

14.8. ສະໜອງຂໍ້ມູນສັນຍາການກໍ່ສ້າງ ແລະ ສ້ອມແປງ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ພ້ອມທັງລາຄາ ຫົວໜ່ວຍ (BOQ) ໃຫ້ແກ່ຂະແໜງການເງິນ ເພື່ອເປັນຖານຂໍ້ມູນໃນການຄຸ້ມຄອງເກັບລາຍຮັບເຂົ້າ ງົບປະມານໃຫ້ຄົບຖ້ວນ;

14.9. ກຳນົດການອະນຸຍາດລົດຂົນສົ່ງສິນຄ້າຜ່ານແດນ, ຂ້າມແດນ ແລະ ຂົນສົ່ງພາຍໃນ ສປປ ລາວ ຂອງບໍລິສັດ ຂົນສົ່ງຕ່າງປະເທດ ໃຫ້ສອດຄ່ອງຕາມກົດໝາຍ ແລະ ລະບຽບການ.

15. ກະຊວງປ້ອງກັນຄວາມສະຫງົບ ຮັບຜິດຊອບ:

15.1. ສ້າງກົນໄກ ເພື່ອໃຫ້ຂະແໜງການກ່ຽວຂ້ອງ ນຳໃຊ້ຖານ ການຄຸ້ມຄອງສຳມະໂນຄົວ ແລະ ບັດປະຈຳຕົວ ເພື່ອເຊື່ອມຂໍ້ມູນເປັນລະບົບດຽວ ໃນການອອກເລກປະຈຳຕົວຜູ້ເສຍອາກອນ ແລະ ການເຄື່ອນໄຫວທຸລະ ກິດຂອງ ບຸກຄົນ ແລະ ນິຕິບຸກຄົນ ໃຫ້ເປັນຖານຂໍ້ມູນດຽວ ສາມາດຄຸ້ມຄອງໄດ້ ແລະ ເປັນຂໍ້ມູນລະບົບ ດຽວກັນ;

15.2. ສະໜອງຂໍ້ມູນ ແລະ ມອບ ຊັບສິນທີ່ບໍ່ມີເຈົ້າຂອງ ແລະ ຊັບສິນ ຈາກການຍຶດ ແລະ ການອຶບ ທີ່ສານ ຕັດສິນໃຊ້ໄດ້ຢ່າງເດັດຂາດ, ອາຍັດ ແລະ ປັບໃໝ ໃຫ້ຂະແໜງການເງິນ ຕາມກົດໝາຍ;

15.3. ສົມທົບກັບ ກະຊວງການເງິນ ກຳນົດກົນໄກການຄຸ້ມຄອງຊັບສິນ ທີ່ລໍຖ້າສານຕັດສິນ ເພື່ອບໍ່ໃຫ້ເສື່ອມມູນ ຄ່າຕາມການເວລາ ໂດຍສ້າງເປັນລະບຽບການ ອັນໃດເປັນສິນຄ້າປະເພດພາຫະນະ ແລະ ປະເພດອື່ນ ເພື່ອດຳເນີນການຂາຍອອກເອົາເງິນໄວ້ບັນຊີ ເວລາສະສາງຄະດີສານຕັດສິນໄດ້ເດັດຂາດ ຈຶ່ງສະສາງບັນຊີ ເງິນດັ່ງກ່າວ ຕາມກົດໝາຍ;

15.4. ສະໜອງຂໍ້ມູນ ຈຳນວນແຂກທີ່ເຂົ້າມາພັກຢູ່ຕາມສະຖານທີ່ ເປັນຕົ້ນ ບ້ານພັກ, ໂຮງແຮມ, ຣີສອດ ໃຫ້ ຂະແໜງການເງິນ ໃນເວລາມີການກວດກາໄລ່ລຽງບັນຊີຫາກເຫັນວ່າມີການຊຸກເຊື່ອງຂໍ້ມູນ.

16. ເຈົ້າຄອງນະຄອນຫຼວງ, ບັນດາທ່ານເຈົ້າແຂວງ ຮັບຜິດຊອບເປັນເຈົ້າການ:

16.1. ຈັດຕັ້ງຜັນຂະຫຍາຍ ບັນດາ ກົດໝາຍ, ນິຕິກຳໃຕ້ກົດໝາຍ ທີ່ນອນຢູ່ໃນຄວາມຮັບຜິດຊອບຂອງ ບັນດາ ຂະແໜງການຂອງສູນກາງ ຕັ້ງຢູ່ທ້ອງຖິ່ນ ແລະ ຂະແໜງການຂອງທ້ອງຖິ່ນ ທີ່ບັນດາກະຊວງ ແລະ ອົງການລັດທຽບເທົ່າກະຊວງ ມີຄວາມຮັບຜິດຊອບຂ້າງເທິງນີ້ ໃຫ້ເປັນອັນລະອຽດ ເພື່ອຈັດຕັ້ງປະຕິບັດ ຢູ່ ບັນດາແຂວງ, ນະຄອນຫຼວງ, ເມືອງ, ນະຄອນ ແລະ ບັນດາເຫດສະບານ;

16.2. ປຸກລະດົມ, ໂຄສະນາເຜີຍແຜ່ ຊຸກຍູ້ ໃຫ້ບັນດາ ບຸກຄົນ ແລະ ນິຕິບຸກຄົນ ທີ່ດຳເນີນທຸລະກິດ ຢູ່ພາຍໃນ ທ້ອງຖິ່ນຂອງຕົນ ເປັນເຈົ້າການ ໃນການຈັດຕັ້ງປະຕິບັດ ບັນດາກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ ບັນດາຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ກຳນົດ ເປັນຕົ້ນ ການຊຸກຍູ້ຫົວໜ່ວຍທຸລະກິດທີ່ມີ ເງື່ອນໄຂຕາມກົດໝາຍ ແລະ ລະບຽບການ ເຂົ້າໃນລະບົບອາກອນມູນຄ່າເພີ່ມ;

16.3. ອອກນິຕິກຳ ເພື່ອສະເໜີສະພາປະຊາຊົນແຂວງ, ນະຄອນຫຼວງ ກ່ຽວກັບການຄຸ້ມຄອງຊັບພະຍາກອນທຳ ມະຊາດ ແລະ ການປະເມີນລາຄາທີ່ດິນ;

16.4. ຍົກສູງປະສິດທິພາບຂອງການຈັດຕັ້ງ ແລະ ການເຄື່ອນໄຫວ ວຽກງານສຶບສວນ-ສອບສວນ ໃນການບັງຄັບ ໃຊ້ກົດໝາຍເພື່ອແກ້ໄຂ ການຄ້າຂາຍເຖື່ອນ, ການລັກລອບຫຼົບຫຼີກ ພາສີ-ອາກອນ ແລະ ຊັບສິນຂອງລັດ ຢ່າງເດັດຂາດ;

16.5. ຊີ້ນຳ ແລະ ດຳເນີນຊຸກຍູ້ຂະແໜງການກ່ຽວຂ້ອງ ເພື່ອດຳເນີນການສຳຫຼວດຈັດປະເພດທຸລະກິດພາຍໃນ ຄວາມຮັບຜິດຊອບຂອງຕົນ ເພື່ອສ້າງຖານຂໍ້ມູນໃນການສ້າງຖານ ແລະ ຂະຫຍາຍຖານລາຍຮັບ ໃນການ ສ້າງລາຍຮັບເຂົ້າງົບປະມານຕາມກົດໝາຍກຳນົດ;

16.6. ຮັບຜິດຊອບ ຊຸກຍູ້ການເຄື່ອນໄຫວຂອງ ສະພາການຄ້າ ແລະ ອຸດສາຫະກຳ ແຂວງ, ນະຄອນຫຼວງ ເພື່ອ ເຮັດໜ້າທີ່ຕາມພາລະບົດບາດຢ່າງແຂງແຮງ ໃນການຊຸກຍູ້ການດຳເນີນທຸລະກິດ, ການແກ້ໄຂບັນດາຂອດ ຂັ້ນສິ່ງອຸດຕັນ, ສ້າງບັນຍາກາດໃໝ່ ໃນການດຳເນີນທຸລະກິດ ໃຫ້ມີຄວາມໂປ່ງໃສ ທະລຸໂລ່ງ ແລະ ສາ ມາດສ້າງເປັນຖານລາຍຮັບໃໝ່ທີ່ໝັ້ນຄົງ, ຍາວນານ ຕາມທິດຍືນຍົງ, ສີຂຽວ;

16.7. ຊຸກຍູ້ໃຫ້ຫົວໜ່ວຍຖືບັນຊີໃນຂອບເຂດຄວາມຮັບຜິດຊອບຂອງຕົນ ຖືບັນຊີຖືກຕ້ອງ ຕາມກົດໝາຍ, ມາດຕະຖານລາຍງານການເງິນ ແລະ ມາດຕະຖານບັນຊີ ເພື່ອຮັບປະກັນໃຫ້ແກ່ການມອບພັນທະເຂົ້າ ງົບປະມານ ໃຫ້ຖືກຕ້ອງ, ຄົບຖ້ວນ, ໂປ່ງໃສ.

17. ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ ແລະ ຂັ້ນແຂວງ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນ ຊີ້ນຳ, ຊຸກຍູ້ສົ່ງເສີມພາກທຸລະກິດ-ສັງຄົມ ມີສ່ວນຮ່ວມ ດັ່ງນີ້:

17.1. ສະພາການຄ້າ ແລະ ອຸດສາຫະກຳ:

17.1.1. ເປັນເຈົ້າການເຕົ້າໂຮມ ຫົວໜ່ວຍທຸລະກິດ ແລະ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ເປັນຕົ້ນ ການລະດົມສ້າງຕັ້ງສະມາຄົມທຸລະກິດ ເພື່ອຊ່ວຍຄຸ້ມ ຄອງ ແລະ ສົ່ງເສີມໃຫ້ຫົວໜ່ວຍທຸລະກິດ ເຂົ້າສູ່ລະບົບ ແລະ ໂຄສະນາເຜີຍແຜ່ ບັນດາກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ພົວພັນກັບການສ້າງຕັ້ງ, ການເຄື່ອນໄຫວທຸລະກິດ ເຊັ່ນ: ກົດໝາຍ ວ່າດ້ວຍວິສາຫະກິດ, ກົດໝາຍວ່າດ້ວຍພາສີ, ກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ, ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ, ກົດໝາຍວ່າດ້ວຍອາກອນຊົມໃຊ້, ກົດໝາຍວ່າດ້ວຍ ອາກອນລາຍໄດ້, ກົດໝາຍວ່າດ້ວຍບັນຊີ, ກົດໝາຍວ່າດ້ວຍການກວດສອບອິດສະລະ, ກົດ ໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ ເພື່ອໃຫ້ຫົວໜ່ວຍທຸລະ ກິດ ເຄື່ອນໄຫວ ແລະ ປະກອບສ່ວນພັນທະເຂົ້າງົບປະມານ ໃຫ້ຖືກຕ້ອງ, ໂປ່ງໃສ ແລະ ຄົບ ຖ້ວນ;

17.1.2. ຊຸກຍູ້ ແລະ ປຸກລະດົມ ຫົວໜ່ວຍທຸລະກິດ ຖືບັນຊີ ຕາມກົດໝາຍບັນຊີ ແລະ ມາດຕະຖານລາຍງານການເງິນ ກຳນົດ ແລະ ນຳໃຊ້ໃບເກັບເງິນຕາມຮູບແບບທີ່ກະຊວງການເງິນກຳນົດ ເພື່ອຮັບປະກັນການປະຕິບັດພັນທະຕ່າງໆ ໃຫ້ຖືກຕ້ອງຕາມກົດໝາຍ;

17.1.3. ປຸກລະດົມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເພື່ອສ້າງຈິດສຳນຶກຄວາມຕື່ນຕົວ, ປະຕິບັດໜ້າທີ່, ສິດ ແລະ ພັນທະ ຂອງພົນລະເມືອງລາວ ແລະ ຊາວຕ່າງດ້າວ ທີ່ດຳລົງຊີວິດຢູ່ ສປປ ລາວ ປະຕິບັດພັນທະເຂົ້າງົບປະມານແຫ່ງລັດ ແລະ ຕ້ານເດັດຂາດການສົມຮູ້ຮ່ວມຄິດກັບເຈົ້າໜ້າທີ່ຂອງລັດທຸກຂັ້ນ, ທຸກລະດັບ ເພື່ອຫຼີກລ້ຽງພັນທະພາສີ-ອາກອນ ແລະ ຕ້ອງປະຕິບັດການແຈ້ງມອບພັນທະຜ່ານລະບົບຄຸ້ມຄອງທີ່ທັນສະໄໝ ແລະ ໂປ່ງໃສ.

17.2. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ: ເອົາໃຈໃສ່ຈັດຕັ້ງປະຕິບັດກົດໝາຍຢ່າງເຂັ້ມງວດ, ເຂົ້າຮ່ວມຈັດຕັ້ງປະຕິບັດພັນທະຕ່າງໆ ຕາມລັດຖະທຳມະນູນ ແລະ ກົດໝາຍ ຕໍ່ ໜ້າທີ່, ສິດ ຂອງພົນລະເມືອງລາວ ແລະ ຜູ້ອາໄສໃນດິນແດນຂອງ ສປປ ລາວ ໃນການປະກອບສ່ວນ, ປົກປັກຮັກສາ ແລະ ພັດທະນາປະເທດຊາດ ໃຫ້ຖືວ່າເປັນພັນທະຂອງໝົດທຸກຄົນໃນຊາດ. ພ້ອມທັງ ເປັນກະບອກສຽງໃນການຕິດຕາມ, ກວດກາ ເຖິງຜົນສຳເລັດ, ບັນດາຊ່ອງວ່າງໃນການປະຕິບັດໜ້າທີ່ຂອງພາກລັດ ທີ່ບໍ່ສອດຄ່ອງກັບ ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການຕ່າງໆ.

18. ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ບັນດາອົງການປົກຄອງທ້ອງຖິ່ນ ປະສານສົມທົບກັບ ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ອົງການພຸດທະສາດສະໜາສຳພັນລາວ, ສື່ມວນຊົນ ທຸກຂັ້ນ ມີໜ້າທີ່ຊ່ວຍ ຊຸກຍູ້, ໂຄສະນາເຜີຍແຜ່, ປະຊາສຳພັນ ໃຫ້ທຸກພາກສ່ວນທົ່ວສັງຄົມໃນການເຂົ້າຮ່ວມ ແລະ ຕິດຕາມ, ກວດກາ ເຖິງຜົນສຳເລັດ ແລະ ບັນດາຊ່ອງວ່າງ ໃນການປະຕິບັດໜ້າທີ່ຂອງພາກລັດ ທີ່ບໍ່ສອດຄ່ອງກັບ ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການຕ່າງໆ.

19. ບັນດາລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ, ປະທານຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ ແລະ ຂັ້ນແຂວງ, ບັນດາທ່ານເຈົ້າແຂວງ ແລະ ເຈົ້າຄອງນະຄອນຫຼວງວຽງຈັນ ໃນທົ່ວປະເທດ ເປັນເຈົ້າການຮັບຜິດຊອບຊີ້ນຳ-ນຳພາ ການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ໃຫ້ເລິກເຊິ່ງ, ທົ່ວເຖິງ ແລະ ມີຜົນເປັນຮູບປະທຳ. ພ້ອມທັງ ເພີ່ມທະວີການປຸກລະດົມຊວນເຊື່ອ, ຈັດຕັ້ງເຊື່ອມຊຶມໃຫ້ພະນັກງານ-ລັດຖະກອນ ທີ່ຢູ່ໃນການຄຸ້ມຄອງຂອງຂະແໜງການຕົນທຸກຂັ້ນ ແລະ ໃຫ້ທົ່ວສັງຄົມ ມີຄວາມເຂົ້າໃຈ ແລະ ມີສະຕິສູງຕໍ່ການຄຸ້ມຄອງ ແລະ ການຈັດເກັບງົບປະມານແຫ່ງລັດ ຢ່າງຮັດກຸມ ແລະ ມີຈຸດສຸມ; ຖືເອົາວຽກງານດັ່ງກ່າວເຂົ້າໃນຂະບວນແຂ່ງຂັນຮັກຊາດ ແລະ ພັດທະນາ; ຕິດຕາມສັງລວມສະພາບການຈັດຕັ້ງປະຕິບັດລາຍງານໃຫ້ລັດຖະບານ ຊາບໃນແຕ່ລະໄລຍະ. ພ້ອມນັ້ນ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ປະຕິບັດໄດ້ດີຈະໄດ້ຮັບການຍ້ອງຍໍດ້ວຍຮູບການຕ່າງໆທີ່ເໝາະສົມ, ກົງກັນຂ້າມຖ້າບໍ່ປະຕິບັດຄຳສັ່ງສະບັບນີ້, ສ້າງຄວາມເສຍຫາຍຈະດຳເນີນມາດຕະການ ເບົາ ຫຼື ໜັກ ຕາມກໍລະນີຢ່າງເຂັ້ມງວດເດັດຂາດ.

20. ຄຳສັ່ງສະບັບນີ້ ມີຜົນສັກສິດ ພາຍຫຼັງລົງລາຍເຊັນ ແລະ ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ

**ນາຍົກລັດຖະມົນຕີ**

ພັນຄຳ ວິພາວັນ